ສະເຫຼີມສະຫຼອງ ຄົບຮອບ 10 ປີ
LEGAL CALENDAR
2009-2019

# ສະບາຍດີປີໃໝ່

## Happy New Year

## ປີກຸນ ພສ ໒໕໖໒ ຄສ 2019

ວິໄສທັດ ຂອງຂະແໜງທີ່ດິນ ແຕ່ນີ້ຮອດປີ 2030:
“ສຳເລັດການຈັດສັນທີ່ດິນ,
ຂຶ້ນທະບຽນອອກໃບຕາດິນ ໃນຂອບເຂດທົ່ວປະເທດ.
ຄຸ້ມຄອງ ແລະ ບໍລິຫານທີ່ດິນ
ໃຫ້ເຂົ້າສູ່ລະບຽບກົດໝາຍ ແລະ ທັນເປັນທັນສະໄໝ”.



ການພັດທະນາທີ່ດິນ ແມ່ນປ່ຽນແປງ ແລະ ການນຳໃຊ້ທີ່ດິນໃຫ້ເກີດຜົນປະໂຫຍດສູງສຸດ ແກ່ປະເທດຊາດ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນບັນດາເຜົ່າ.
ສະນັ້ນ, ການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຈຶ່ງເປັນຫົວໃຈສຳຄັນໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດໃນແຕ່ລະໄລຍະ. ໂດຍແມ່ນລັດຖະບານເປັນ ຜູ້ຄຸ້ມຄອງທີ່ດິນຢ່າງລວມສູນ, ເປັນເອກະພາບ ແລະ ມີປະສິດທິພາບ ໃນຂອບເຂດທົ່ວປະເທດ ດ້ວຍການແບ່ງຄວາມຮັບຜິດຊອບໃຫ້ແຕ່ລະຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດນະໂຍບາຍ ແລະ ຍຸດທະສາດການນຳໃຊ້ທີ່ດິນຂອງຂະແໜງການດິນ ໂດຍປະສານສົມທົບກັບອົງການປົກ ຄອງທ້ອງຖິ່ນ ເພື່ອຄຸ້ມຄອງ, ວາງແຜນການນຳ ໃຊ້ທີ່ດິນ ແລະ ປົກປັກຮັກສາສິ່ງແວດລ້ອມພ້ອມທັງຕິດຕາມກວດກາການນຳໃຊ້ທີ່ດິນ ແລະ ແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ຮັບປະກັນໃຫ້ສັງຄົມມີຄວາມສະຫງົບ, ສີວິໄລ ແລະ ຍຸຕິທຳ.

ພິມສະບັບທີ 10, ປີທີ 10

ເລກທີ່ອະນຸມັດຈັດພິມ
35/ພຊ 06112018



ຜະລິດໂດຍ:

# ການຂຶ້ນທະບຽນທີ່ດິນ ແລະ ການຫັນປ່ຽນທີ່ດິນ




**ມັງກອນ** **1 January** ຄສ 2019 / ພສ 2562

| SUN | M | T | W | THU | F | S |
|---|---|---|---|---|---|---|
| | | 1 | 2 | 3 | 4 | 5 |
| 6 | 7 | 8 | 9 | 10 | 11 | 12 |
| 13 | 14 | 15 | 16 | 17 | 18 | 19 |
| 20 | 21 | 22 | 23 | 24 | 25 | 26 |
| 27 | 28 | 29 | 30 | 31 | | |

1 ປີໃໝ່ສາກົນ

**ກຸມພາ** **2 February** ຄສ 2019 / ພສ 2562

| SUN | M | T | W | THU | F | S |
|---|---|---|---|---|---|---|
| | | | | | 1 | 2 |
| 3 | 4 | 5 | 6 | 7 | 8 | 9 |
| 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 |
| 24 | 25 | 26 | 27 | 28 | | |

**ເອກະສານອ້າງອີງ:** ກົດໝາຍວ່າດ້ວຍ ທີ່ດິນ ເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003 ມາດຕາ 43 ການຂຶ້ນທະບຽນທີ່ດິນ. ການຂຶ້ນທະບຽນທີ່ດິນແມ່ນ ການຢັ້ງຢືນສິດນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍໃຫ້ແກ່ບຸກຄົນ ຫລື ການຈັດຕັ້ງເພື່ອບໍ່ໃຫ້ມີການປອມແປງສິດນຳໃຊ້ທີ່ດິນ, ອຳນວຍຄວາມສະດວກໃຫ້ແກ່ການຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນຢ່າງເປັນເອກະພາບໃນທົ່ວປະເທດ; ໃນການຂຶ້ນທະບຽນທີ່ດິນຕ້ອງຈົດກ່າຍຂໍ້ມູນຕ່າງໆເຂົ້າປຶ້ມທະບຽນທີ່ດິນ: ຊື່ ແລະ ນາມສະກຸນຂອງຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນ, (ຊື່ ແລະ ນາມສະກຸນຂອງຜົວ ແລະ ເມຍ ໃນກໍລະນີເປັນສິນສົມສ້າງ).

**ເອກະສານອ້າງອີງ:** ຄຳແນະນຳ ວ່າດ້ວຍການຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນ ເລກທີ່ 6036/ກຊສ, ລົງວັນທີ 27 ສິງຫາ 2014 ການຂຶ້ນທະບຽນທີ່ດິນແມ່ນການຢັ້ງຢືນສິດນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍໃຫ້ແກ່ ບຸກຄົນ ຫຼື ການຈັດຕັ້ງເພື່ອບໍ່ໃຫ້ມີການປອມແປງສິດນຳໃຊ້ທີ່ດິນ, ອຳນວຍຄວາມສະດວກໃຫ້ແກ່ການຄຸ້ມຄອງ ແລະ ປົກປັກຮັກສາ ທີ່ດິນຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ; ດ້ວຍການພິຈາລະນາລະອຽດຕ່າງໆ ກ່ຽວກັບຕອນດິນ, ໃນດ້ານທີ່ຕັ້ງ, ຮູບຮ່າງ, ຂະໜາດ, ປະເພດ, ເຂດ, ສິດ ແລະ ພັນທະ ຂອງຜູ້ຄອບຄອງນຳໃຊ້ທີ່ດິນ. ຊຶ່ງໄດ້ກຳນົດໄວ້ຢູ່ໃນລະບຽບກົດໝາຍ ໂອຍອີງໃສ່ຂໍ້ມູນຫຼັກຖານການຄຸ້ມຄອງທີ່ດິນ ແລະ ການນຳໃຊ້ທີ່ດິນ. ການຂຶ້ນທະບຽນທີ່ດິນມີ 2 ຮູບແບບຄື: ແບບເປັນລະບົບ ແລະ ແບບສະເພາະຕອນຕາມການຮ້ອງຂໍ.

**ເອກະສານອ້າງອີງ:** ຄຳແນະນຳ ວ່າດ້ວຍການຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນ ເລກທີ່ 6036/ກຊສ, ລົງວັນທີ 27 ສິງຫາ 2014 ຂໍ້ 1.3. (ຂໍ້ 8 )
**ສຳມະໂນທີ່ດິນ:** ໝາຍເຖິງການເກັບກຳສະຖິຕິຕອນດິນ ປະເພດຕ່າງໆເຂົ້າໃນປຶ້ມສຳມະໂນທີ່ດິນ ພ້ອມທັງຕິດຕາມການເຄື່ອນໄຫວ ແລະ ການຫັນປ່ຽນປະເພດທີ່ດິນ, ສິດໃຊ້ ແລະ ສິດນຳໃຊ້ ຢູ່ພາຍໃນບ້ານ ໂດຍໜ່ວຍງານຄຸ້ມຄອງທີ່ດິນຂັ້ນບ້ານເປັນຜູ້ດຳເນີນການຈັດຕັ້ງປະຕິບັດ.

**ເອກະສານອ້າງອີງ:** ກົດໝາຍວ່າດ້ວຍ ທີ່ດິນ ເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003 ມາດຕາ 14 ການຫັນປ່ຽນທີ່ດິນ ການຫັນປ່ຽນທີ່ດິນປະເພດໜຶ່ງໄປສູ່ປະເພດອື່ນ ຈະດຳເນີນໄດ້ກໍຕໍ່ເມື່ອຫາກເຫັນວ່າມີຄວາມຈຳເປັນນຳໃຊ້ເຂົ້າໃນເປົ້າໝາຍອື່ນ ໂດຍບໍ່ໃຫ້ມີຜົນກະທົບ ອັນບໍ່ດີຕໍ່ສິ່ງແວດລ້ອມທຳມະຊາດ, ສັງຄົມ ແລະ ຕ້ອງໄດ້ຮັບອະນຸມັດຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ.

**ເບີໂທສາຍດ່ວນ:**
**ສາຍດ່ວນກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ**: 1514
**ຫ້ອງການກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ**: 021 263 577
**ຂ່າວສານ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**: 030 563 2639
**ສາຍດ່ວນສະພາແຫ່ງຊາດ**: 156
**ສາຍດ່ວນລັດຖະບານ**: 1516
**ສູນໃຫ້ຄຳປຶກສາຂອງສະຫະພັນແມ່ຍິງລາວ**: 1362
**ຂ່າວສານແຮງງານ ແລະ ສະຫວັດດີການສັງຄົມ**: 021 213 003
**ສະພາທະນາຍຄວາມແຫ່ງ ສປປ ລາວ**: 021 353 953
**ສູນບໍລິການກົດໝາຍເພື່ອປະຊາຊົນ ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ**: 021 486 015

**ຜະລິດ ແລະ ສະໜັບສະໜູນໂດຍ:**

# ການປົກປັກຮັກສາປ່າໄມ້ແບບມີສ່ວນຮ່ວມຂອງຂັ້ນບ້ານ




| ມີນາ | | | 3 March | | | |
|---|---|---|---|---|---|---|
| ອາທິດ | ຈັນ | ອັງຄານ | ພຸດ | ພະຫັດ | ສຸກ | ເສົາ |
| SUN | M | T | W | THU | F | S |
| | | | | | 1 | 2 |
| 3 | 4 | 5 | 6 | 7 | 8 | 9 |
| 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 |
| 24 | 25 | 26 | 27 | 28 | 29 | 30 |
| 31 | | | | | | |

8 ວັນແມ່ຍິງສາກົນ

| ເມສາ | | | 4 April | | | |
|---|---|---|---|---|---|---|
| ອາທິດ | ຈັນ | ອັງຄານ | ພຸດ | ພະຫັດ | ສຸກ | ເສົາ |
| SUN | M | T | W | THU | F | S |
| | 1 | 2 | 3 | 4 | 5 | 6 |
| 7 | 8 | 9 | 10 | 11 | 12 | 13 |
| 14 | 15 | 16 | 17 | 18 | 19 | 20 |
| 21 | 22 | 23 | 24 | 25 | 26 | 27 |
| 28 | 29 | 30 | | | | |

ບຸນປີໃໝ່ລາວ 14-15-16

ເອກະສານອ້າງອີງ: ກົດໝາຍປ່າໄມ້ ເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007 ມາດຕາ 108 ສິດ ແລະ ໜ້າທີ່ຂອງໜ່ວຍງານປ່າໄມ້ບ້ານ ໃນການຄຸ້ມຄອງ ປ່າໄມ້, ທີ່ດິນປ່າໄມ້ ແລະ ກິດຈະການປ່າໄມ້; ໜ່ວຍງານປ່າໄມ້ບ້ານມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ ແລະ ສະເໜີໃຫ້ອົງການປົກຄອງບ້ານ ອອກກົດລະບຽບການນຳໃຊ້ປ່າໄມ້ ຂັ້ນບ້ານ ຕາມປະເພນີ; ໂດຍສອດຄ່ອງກັບລະບຽບກົດໝາຍກ່ຽວກັບປ່າໄມ້;
2. ເຜີຍແຜ່ລະບຽບການກ່ຽວກັບປ່າໄມ້ ເປັນຕົ້ນຄວາມສຳຄັນ ແລະ ຄຸນປະໂຫຍດຂອງປ່າໄມ້, ທີ່ດິນປ່າໄມ້, ປ່າຍອດນ້ຳ ແລະ ສິ່ງແວດລ້ອມ ໃຫ້ປະຊາຊົນໃນບ້ານຂອງຕົນ;
3. ຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບປ່າໄມ້, ການມອບດິນ-ມອບປ່າ ຂອງບ້ານ ໃຫ້ບຸກຄົນ ແລະ ການຈັດຕັ້ງພາຍໃນບ້ານ ຄຸ້ມຄອງ, ປົກປັກຮັກສາ, ຟື້ນຟູ, ປູກ, ຂະຫຍາຍ ແລະ ນຳໃຊ້ຢ່າງມີປະສິດທິຜົນ;
4. ຈັດຕັ້ງປະຊາຊົນຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້, ປ່າຍອດນ້ຳ, ເຄື່ອງປ່າຂອງດົງ ແລະ ສິ່ງແວດລ້ອມພາຍໃນບ້ານໃຫ້ຖືກຕ້ອງກັບສະພາບຕົວຈິງ ຂອງບ້ານຕົນເອງ;
5. ຕິດຕາມ, ເກັບກຳສະພາບການປ່ຽນແປງ ຂອງປ່າໄມ້, ສິ່ງແວດລ້ອມ ແລະ ສະພາບການເຄື່ອນໄຫວວຽກງານປ່າໄມ້ໃນຂອບເຂດບ້ານຂອງຕົນແລ້ວລາຍງານໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ;
6. ເປັນເຈົ້າການຕິດຕາມ, ສະກັດກັ້ນ ແລະ ຕ້ານການເຄື່ອນໄຫວ ອັນບໍ່ດີທີ່ມີຜົນກະທົບຕໍ່ ປ່າ ໄມ້, ເຄື່ອງປ່າຂອງດົງ, ປ່າຍອດນ້ຳ ແລະ ສິ່ງແວດລ້ອມເຊັ່ນ: ການລັກລອບຕັດໄມ້, ການຈູດປ່າ ແລະ ການກະທຳທີ່ເປັນການທຳລາຍປ່າໄມ້ຢ່າງທັນການ;
7. ສະຫລຸບລາຍງານຜົນການຈັດຕັ້ງປະຕິບັດວຽກງານປ່າໄມ້ພາຍໃນບ້ານ, ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດ-ສະບານ ແລະ ອົງການປົກຄອງບ້ານຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ສົມທົບ 10 ສະບັບ ປີທອງ 10
LEGAL CALENDAR
2009-2019

ເບີໂທສາຍດ່ວນ:
ສາຍດ່ວນກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ: 1514
ຫ້ອງການກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ: 021 263 577
ຂ່າວສານ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ: 030 563 2639
ສາຍດ່ວນສະພາແຫ່ງຊາດ: 156
ສາຍດ່ວນລັດຖະບານ: 1516
ສູນໃຫ້ຄຳປຶກສາຂອງສະຫະພັນແມ່ຍິງລາວ: 1362
ຂ່າວສານແຮງງານ ແລະ ສະຫວັດດີການສັງຄົມ: 021 213 003
ສະພາທະນາຍຄວາມແຫ່ງ ສປປ ລາວ: 021 353 953
ສູນບໍລິການກົດໝາຍເພື່ອປະຊາຊົນ ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ: 021 486 015

ຜະລິດ ແລະ ສະໜັບສະໜູນໂດຍ:

# ການລົງທຶນແບບມີຄວາມຮັບຜິດຊອບ




**ພຶດສະພາ** **5 May** ຄສ 2019 / ພສ 2562

| ອາທິດ SUN | ຈັນ M | ອັງຄານ T | ພຸດ W | ພະຫັດ THU | ສຸກ F | ເສົາ S |
|---|---|---|---|---|---|---|
| | | | 1 | 2 | 3 | 4 |
| 5 | 6 | 7 | 8 | 9 | 10 | 11 |
| 12 | 13 | 14 | 15 | 16 | 17 | 18 |
| 19 | 20 | 21 | 22 | 23 | 24 | 25 |
| 26 | 27 | 28 | 29 | 30 | 31 | |

*1 ວັນກຳມະກອນ*

**ມິຖຸນາ** **6 June** ຄສ 2019 / ພສ 2562

| ອາທິດ SUN | ຈັນ M | ອັງຄານ T | ພຸດ W | ພະຫັດ THU | ສຸກ F | ເສົາ S |
|---|---|---|---|---|---|---|
| | | | | | | 1 |
| 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 |
| 16 | 17 | 18 | 19 | 20 | 21 | 22 |
| 23 | 24 | 25 | 26 | 27 | 28 | 29 |
| 30 | | | | | | |

*1 ວັນປູກຕົ້ນໄມ້ແຫ່ງຊາດ ແລະ ວັນເດັກນ້ອຍສາກົນ*

**ເອກະສານອ້າງອີງ: ກົດໝາຍ ວ່າດ້ວຍ ການສົ່ງເສີມການລົງທຶນ ເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016**

ສະເຫຼີມ 10 ສະຫຼອງ ປີ LEGAL CALENDAR 2009-2019

**ມາດຕາ 72 ພັນທະຕໍ່ລັດ ຜູ້ລົງທຶນ ມີ ພັນທະຕໍ່ລັດ ດັ່ງນີ້:**

1. ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຢ່າງຄົບຖ້ວນ ແລະ ທັນເວລາ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ, ໃນກໍລະນີຈຳເປັນ ກໍ່ສາມາດນຳໃຊ້ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີຈາກກະຊວງການເງິນ ຂອງ ສປປ ລາວ;
3. ໃຫ້ຄວາມຮ່ວມມື ແລະ ປະສານງານ ເປັນຢ່າງດີກັບອົງການປົກຄອງທ້ອງຖິ່ນ ໃນການເຄື່ອນໄຫວວຽກງານທຸລະກິດ;
4. ສົ່ງເສີມການນຳໃຊ້ແຮງງານລາວ ໂດຍສະເພາະແຮງງານແມ່ຍິງ ແລະ ຊົນເຜົ່າ; ເອົາໃຈໃສ່ໃນການພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຊີໃຫ້ແກ່ຜູ້ອອກແຮງງານລາວ;
5. ປະກອບສ່ວນທາງດ້ານງົບປະມານໃນວຽກງານ ຕິດຕາມ, ກວດກາໂຄງການລົງທຶນ;
6. ສະຫຼຸບ, ລາຍງານ ການດຳເນີນທຸລະກິດຂອງຕົນ ປະຈຳ ສາມເດືອນ, ຫົກເດືອນ ແລະ ປະຈຳປີ ຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ຂະແໜງການທີ່ກ່ຽວຂ້ອງ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 73 ພັນທະດ້ານສັງຄົມ ຜູ້ລົງທຶນ ມີ ພັນທະດ້ານສັງຄົມ ດັ່ງນີ້:**

1. ປະຕິບັດລະບອບປະກັນສັງຄົມ ແລະ ປະກັນໄພຕໍ່ຜູ້ອອກແຮງງານໃນວິສາຫະກິດຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນໃນວິສາຫະກິດຂອງຕົນ ໂດຍສະເພາະແມ່ນອົງການຈັດຕັ້ງກຳມະບານ;
3. ຄົບລົບ, ນັບຖືຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງທ້ອງຖິ່ນ;
4. ທົດແທນຄ່າເສຍຫາຍໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ຈາກການດຳເນີນທຸລະກິດ ຂອງຕົນ;
5. ປະກອບສ່ວນຊຸກຍູ້, ສົ່ງເສີມທຸລະກິດພາຍໃນ, ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ພັດທະນາທ້ອງຖິ່ນໃນເຂດໂຄງການຂອງຕົນ;
6. ປະກອບສ່ວນທາງດ້ານງົບປະມານ ໃນວຽກງານພັດທະນາສັງຄົມ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 74 ພັນທະດ້ານ ສິ່ງແວດລ້ອມ**

ຜູ້ລົງທຶນ ມີ ພັນທະດ້ານສິ່ງແວດລ້ອມ ດັ່ງນີ້:

1. ປະຕິບັດພັນທະດ້ານສິ່ງແວດລ້ອມ ຢ່າງເຄັ່ງຄັດ, ສົ່ງເສີມການພັດທະນາ ແລະ ເຕີບໂຕແບບສີຂຽວ, ຖືສຳຄັນການປົກປັກຮັກສາສະພາບແວດລ້ອມ ຕາມກົດໝາຍ ແລະ ລະບຽບການ;
2. ໃນກໍລະນີ ເກີດບັນຫາດ້ານສິ່ງແວດລ້ອມ ຜູ້ລົງທຶນ ມີພັນທະປະຕິບັດມາດຕະການທີ່ຈຳເປັນເພື່ອແກ້ໄຂສະພາບດັ່ງກ່າວຢ່າງທັນການ ຕາມກົດໝາຍ ແລະ ລະບຽບການ;
3. ປະຕິບັດພັນທະດ້ານສິ່ງແວດລ້ອມ ຕາມສົນທິສັນຍາ ຫຼື ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
4. ປະກອບສ່ວນທາງດ້ານງົບປະມານໃນວຽກງານສິ່ງແວດລ້ອມ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

4. ປະກອບສ່ວນທາງດ້ານງົບປະມານໃນວຽກງານສິ່ງແວດລ້ອມ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຜະລິດ ແລະ ສະໜັບສະໜູນໂດຍ:**

# ການເຮັດສັນຍາທີ່ຖືກຕ້ອງຕາມກົດໝາຍ




| ກໍລະກົດ | | | 7 July | | | ຄສ 2019 / ພສ 2562 |
|---|---|---|---|---|---|---|
| ອາທິດ SUN | ຈັນ M | ອັງຄານ T | ພຸດ W | ພະຫັດ THU | ສຸກ F | ເສົາ S |
| | 1 | 2 | 3 | 4 | 5 | 6 |
| 7 | 8 | 9 | 10 | 11 | 12 | 13 |
| 14 | 15 | 16 | 17 | 18 | 19 | 20 |
| 21 | 22 | 23 | 24 | 25 | 26 | 27 |
| 28 | 29 | 30 | 31 | | | |

16 ວັນຈາລະຈອນທາງ
20 ວັນສ້າງຕັ້ງສະຫະພັນແມ່ຍິງ

| ສິງຫາ | | | 8 August | | | ຄສ 2019 / ພສ 2562 |
|---|---|---|---|---|---|---|
| ອາທິດ SUN | ຈັນ M | ອັງຄານ T | ພຸດ W | ພະຫັດ THU | ສຸກ F | ເສົາ S |
| | | | | 1 | 2 | 3 |
| 4 | 5 | 6 | 7 | 8 | 9 | 10 |
| 11 | 12 | 13 | 14 | 15 | 16 | 17 |
| 18 | 19 | 20 | 21 | 22 | 23 | 24 |
| 25 | 26 | 27 | 28 | 29 | 30 | 31 |

LEGAL CALENDAR 2009-2019

ເອກະສານອ້າງອີງ : ກົດໝາຍວ່າດ້ວຍຂໍ້ຜູກພັນນອກ - ໃນສັນຍາ ມາດຕາ 10 ສັນຍາ ຕ້ອງເຮັດຂຶ້ນໃຫ້ຄົບຖ້ວນຕາມເງື່ອນໄຂ ດັ່ງນີ້ :

1. ຄວາມສະໝັກໃຈຂອງຄູ່ສັນຍາ; 2. ຄວາມສາມາດທາງດ້ານການປະພຶດຂອງຄູ່ສັນຍາ;
3. ວັດຖຸປະສົງຂອງສັນຍາ ຕ້ອງໃຫ້ຊັດເຈນ, ມີຈິງ ແລະ ຖືກຕ້ອງຕາມກົດໝາຍ; 4. ເຫດຜົນຂອງສັນຍາ ຕ້ອງໃຫ້ຖືກຕ້ອງຕາມສັນຍາ;
5. ຮູບການຂອງສັນຍາ ຕ້ອງໃຫ້ສອດຄ່ອງກັບການກຳນົດຂອງກົດໝາຍ;

**ມາດຕາ 16 ເນື້ອໃນຂອງສັນຍາ**

ສັນຍາ ອາດປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

- ຊື່, ນາມສະກຸນ ແລະ ບ່ອນຢູ່ ຂອງສັນຍາ; - ວັດຖຸປະສົງ, ລາຄາ, ກຳນົດເວລາປະຕິບັດ, ການຊຳລະ, ການນຳສົ່ງ;
- ຂອບເຂດ, ປະລິມານ ແລະ ຄຸນນະພາບ ຂອງເປົ້າໝາຍ; - ສະຖານທີ່ຂອງການປະຕິບັດສັນຍາ ແລະ ພັນທະໃນການແຈ້ງໃຫ້ແກ່ກັນຊາບ;
- ຜົນສະທ້ອນຂອງການລະເມີດສັນຍາ; - ຮູບການ ແລະ ວິທີການແກ້ໄຂຂໍ້ຂັດແຍ່ງ;
- ເງື່ອນໄຂຂອງການປ່ຽນແປງ ແລະ ການສິ້ນສຸດສັນຍາກ່ອນກຳນົດ; ວັດຖຸປະສົງ, ລາຄາ, ກຳນົດເວລາປະຕິບັດ ແມ່ນເນື້ອໃນອັນຈຳເປັນສຳລັບສັນຍາທຸກປະເພດ.

**ມາດຕາ 8 ສັນຍາ (ປັບປຸງ)**

- ສັນຍາ ແມ່ນການຕົກລົງລະຫວ່າງຄູ່ສັນຍາ ຊຶ່ງພາໃຫ້ເກີດສິດ ແລະ ພັນທະທາງແພ່ງ ເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ
- ສັນຍາອາດຈະເຮັດຂຶ້ນລະຫວ່າງ;
- ອົງການຈັດຕັ້ງຂອງລັດ ຫລື ລວມໝູ່ດ້ວຍກັນ;
- ອົງການຈັດຕັ້ງຂອງລັດ ຫລື ລວມໝູ່ກັບນິຕິບຸກຄົນອື່ນ ຫລື ບຸກຄົນ;
- ນິຕິບຸກຄົນ ຫລື ບຸກຄົນດ້ວຍກັນ; - ນິຕິບຸກຄົນ ກັບ ບຸກຄົນ;

**ມາດຕາ 24 ການປະຕິບັດສັນຍາ (ປັບປຸງ)**

ຄູ່ສັນຍາ ຕ້ອງປະຕິບັດສັນຍາດ້ວຍຄວາມຈິງໃຈ, ຄົບຖ້ວນ, ຕາມກຳນົດເວລາ ແລະ ໃນສະຖານທີ່ ຊຶ່ງໄດ້ກຳນົດໄວ້ໃນສັນຍາ ຫລື ກົດໝາຍ.
ຄູ່ສັນຍາ ບໍ່ມີສິດ ປະຕິບັດສັນຍາ ຫລື ປ່ຽນແປງເງື່ອນໄຂຂອງສັນຍາແຕ່ຝ່າຍດຽວ ເວັ້ນເສຍແຕ່ກໍລະນີທີ່ກົດໝາຍຫາກໄດ້ອະນຸຍາດໃຫ້.
ຄູ່ສັນຍາ ມີສິດບໍ່ຮັບເອົາການປະຕິບັດ ທີ່ບໍ່ຄົບຖ້ວນ, ບໍ່ຖືກຕ້ອງ ແລະ ສອດຄ່ອງກັບສັນຍາ ຫລື ກົດໝາຍ ເວັ້ນເສຍແຕ່ ສັນຍາ ຫລື ກົດໝາຍ ຫາກໄດ້ກຳນົດໄວ້ຢ່າງອື່ນ.

**ມາດຕາ 38 ການສິ້ນສຸດສັນຍາ**

ສັນຍາ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້ :

- ສັນຍາທີ່ໄດ້ປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ;
- ຄູ່ສັນຍາ ໄດ້ເຂົ້າຮ່ວມເປັນອັນດຽວກັນ;
- ຄູ່ສັນຍາ ໄດ້ມີການຕົກລົງກັນ;
- ສັນຍາ ບໍ່ສາມາດປະຕິບັດໄດ້;
- ຄູ່ສັນຍາຝ່າຍໃດໜຶ່ງ ໄດ້ເສຍຊີວິດ ຊຶ່ງບຸກຄົນອື່ນບໍ່ສາມາດສືບຕໍ່ປະຕິບັດໄດ້;
- ນິຕິບຸກຄົນທີ່ເປັນຄູ່ສັນຍາ ໄດ້ຖືກຍຸບເລີກ ຫລື ລົ້ມລະລາຍ;

ໃນກໍລະນີທີ່ບຸກຄົນໃດໜຶ່ງ ຫາກຖືກຍຸບເລີກ ຫລື ລົ້ມລະລາຍ ຄູ່ສັນຍາຂອງນິຕິບຸກຄົນນັ້ນ ມີສິດທວງເອົາຄ່າໃຊ້ຈ່າຍ ແລະ ຄ່າເສຍຫາຍຕ່າງໆ ຈາກຜູ້ຮັບຜິດຊອບຊັບສິນຂອງນິຕິບຸກຄົນທີ່ໄດ້ຖືກຍຸບເລີກ ຫລື ລົ້ມລະລາຍນັ້ນ.

ຜະລິດ ແລະ ສະໜັບສະໜູນໂດຍ:

# ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍຈາກໂຄງການພັດທະນາ




## ສິດ ແລະ ພັນທະຂອງຜູ້ໄດ້ຮັບຜົນກະທົບ


ຮັບການທົດແທນ, ການຈັດສັນຍົກຍ້າຍ, ການຟື້ນຟູຊີວິດການເປັນຢູ່


ເຂົ້າຮ່ວມກອງປະຊຸມປຶກສາຫາລື


ສະເໜີເພື່ອການແກ້ໄຂບັນຫາ


ຮັບຂໍ້ມູນຂ່າວສານ


ເຂົ້າຮ່ວມເປັນເຈົ້າການປະຕິບັດແຜນ


ສະໜອງຂໍ້ມູນໃຫ້ຊັດເຈນ ຖືກຕ້ອງຕາມຄວາມເປັນຈິງ


ໃຫ້ຄວາມຮ່ວມມື ແກ່ເຈົ້າຂອງໂຄງການ


ປະຕິບັດສິດ ແລະ ພັນທະອື່ນໆ

ກັນຍາ — 9 September — ປີກຸນ ຄສ 2019 ພສ 2562

| ອາທິດ SUN | ຈັນ M | ອັງຄານ T | ພຸດ W | ພະຫັດ THU | ສຸກ F | ເສົາ S |
|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 |
| 8 | 9 | 10 | 11 | 12 | 13 | 14 |
| 15 | 16 | 17 | 18 | 19 | 20 | 21 |
| 22 | 23 | 24 | 25 | 26 | 27 | 28 |
| 29 | 30 | | | | | |

ຕຸລາ — 10 October — ປີກຸນ ຄສ 2019 ພສ 2562

| ອາທິດ SUN | ຈັນ M | ອັງຄານ T | ພຸດ W | ພະຫັດ THU | ສຸກ F | ເສົາ S |
|---|---|---|---|---|---|---|
| | | 1 | 2 | 3 | 4 | 5 |
| 6 | 7 | 8 | 9 | 10 | 11 | 12 |
| 13 | 14 | 15 | 16 | 17 | 18 | 19 |
| 20 | 21 | 22 | 23 | 24 | 25 | 26 |
| 27 | 28 | 29 | 30 | 31 | | |

*13 ວັນອອກພັນສາ 16 ວັນອາຫານໂລກ*
*14 ວັນບຸນຊ່ວງເຮືອ*

**ເອກະສານອ້າງອີງ: (ກົດໝາຍວ່າດ້ວຍທີ່ດິນ ພາກທີ 3 ໝວດທີ 3 ມາດຕາທີ 71 )**
**ດຳລັດ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ ເລກທີ 84/ລບ, ລົງວັນທີ 5 ເມສາ 2016**

LEGAL CALENDAR 2009-2019

**ມາດຕາ 5 ຫຼັກການພື້ນຖານກ່ຽວກັບ ການທົດແທນຄ່າເສັຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ**

ການທົດແທນຄ່າເສັຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ໃຫ້ປະຕິບັດຕາມຫຼັກການພື້ນຖານດັ່ງນີ້:

1. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ໄດ້ຮັບຜົນກະທົບ;
2. ມີຄວາມສະເໝີພາບ, ຖືກຕ້ອງໂປ່ງໃສ, ເປີດເຜີຍ ແລະ ຍຸຕິທຳ;
3. ມີການປະສານສົມທົບ, ປຶກສາຫາລື ແລະ ເຂົ້າຮ່ວມ ລະຫວ່າງ ເຈົ້າຂອງໂຄງການ, ຜູ້ໄດ້ຮັບຜົນກະທົບ, ການຈັດຕັ້ງພາກລັດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 18 ສິດ ແລະ ພັນທະຂອງຜູ້ໄດ້ຮັບຜົນກະທົບ**

ໃນການທົດແທນຄ່າເສຍ ແລະ ຈັດສັນຍົກຍ້າຍ ຜູ້ໄດ້ຮັບຜົນກະທົບ ມີສິດ ແລະ ພັນທະ ດັ່ງນີ້:

1. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບ ໂຄງການພັດທະນາ, ຜົນປະໂຫຍດ ແລະ ຜົນກະທົບທີ່ຕົນຈະໄດ້ຮັບ, ຄວາມຄືບໜ້າ ກ່ຽວກັບການປະຕິບັດແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນຕະຫຼອດໄລຍະເວລາການຈັດຕັ້ງປະຕິບັດໂຄງການພັດທະນາ;
2. ເຂົ້າຮ່ວມກອງປະຊຸມປຶກສາຫາລືໃນລະດັບຕ່າງໆ, ປະກອບຄຳເຫັນຕໍ່ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງຕົນ;
3. ໄດ້ຮັບການທົດແທ່ນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ;
4. ສະເໜີເປັນລາຍລັກອັກສອນ ຕໍ່ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ປະຈຳທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂບັນຫາທີ່ຕິດພັນກັບການທົດແທນ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງຕົນ ຈາກໂຄງການພັດທະນາ;
5. ເຂົ້າຮ່ວມ ຢ່າງເປັນເຈົ້າການ ໃນການຈັດຕັ້ງປະຕິບັດແຜນການທົດແທນ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ;
6. ສະໜອງຂໍ້ມູນໃຫ້ຊັດເຈນ, ຖືກຕ້ອງຕາມຄວາມເປັນຈິງ ພ້ອມທັງ ຮັບຜິດຊອບຕໍ່ໜ້າທີ່ກົດໝາຍ ກ່ຽວກັບຂໍ້ສະເໜີຂອງຕົນ;
7. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ແກ່ເຈົ້າຂອງໂຄງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດ ແຜນການທົດແທນ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ ລວມທັງການໃຂ້ຂໍ້ສະເໜີຂອງຕົນ;
8. ປະຕິດບັດສິດ ແລະ ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ຜະລິດ ແລະ ສະໜັບສະໜູນໂດຍ:**

# ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ຊ່ອງທາງເຂົ້າເຖິງການຊ່ວຍເຫລືອທາງດ້ານກົດໝາຍ




| ພະຈິກ | | | 11 November | | | |
|---|---|---|---|---|---|---|
| ອາທິດ | ຈັນ | ອັງຄານ | ພຸດ | ພະຫັດ | ສຸກ | ເສົາ |
| SUN | M | T | W | THU | F | S |
| | | | | | 1 | 2 |
| 3 | 4 | 5 | 6 | 7 | 8 | 9 |
| 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 |
| 24 | 25 | 26 | 27 | 28 | 29 | 30 |

11 ວັນບຸນທາດຫຼວງ

| ທັນວາ | | | 12 December | | | |
|---|---|---|---|---|---|---|
| ອາທິດ | ຈັນ | ອັງຄານ | ພຸດ | ພະຫັດ | ສຸກ | ເສົາ |
| SUN | M | T | W | THU | F | S |
| 1 | 2 | 3 | 4 | 5 | 6 | 7 |
| 8 | 9 | 10 | 11 | 12 | 13 | 14 |
| 15 | 16 | 17 | 18 | 19 | 20 | 21 |
| 22 | 23 | 24 | 25 | 26 | 27 | 28 |
| 29 | 30 | 31 | | | | |

2 ວັນຊາດ

LEGAL CALENDAR 2009-2019

ເອກະສານອ້າງອີງ: ດຳລັດວ່າດ້ວຍ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ທີ່ດິນ ສະບັບເລກທີ 88/ນຍ, ລົງວັນທີ 03 ມິຖຸນາ 2008

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ( ມາດຕາ 31 ).
ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ຕ້ອງປະຕິບັດໃຫ້ສອດຄ່ອງກັບ ມາດຕາ 80 ແລະ 81 ຂອງກົດໝາຍວ່າດ້ວຍ ທີ່ດິນ.
ສຳລັບຄະດີກ່ຽວກັບທີ່ດິນ ທີ່ສານໄດ້ຕັດສິນຢ່າງຖືກຕ້ອງ ແລະ ໄດ້ໃຊ້ຢ່າງເດັດຂາດນັ້ນໃຫ້ປະຕິບັດຢ່າງເຂັ້ມງວດ.
ບຸກຄົນ ຫຼື ອົງການຈັດຕັ້ງໃດ ທີ່ມີຈຸດປະສົງຢາກແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ຕ້ອງໄດ້ຍື່ນຄຳຮ້ອງ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງຕໍ່ອົງການຄຸ້ມຄອງທີ່ດິນ ເພື່ອຄົ້ນຄວ້າແກ້ໄຂ ໂດຍສົມທົບກັບອົງການປົກຄອງທ້ອງຖິ່ນບ່ອນທີ່ດິນຕັ້ງຢູ່.
ໃນກໍລະນີທີ່ອົງການຄຸ້ມຄອງທີ່ດິນບໍ່ສາມາດແກ້ໄຂໄດ້ກໍ່ໃຫ້ດຳເນີນການແກ້ໄຂໄປຕາມຂະບວນການຍຸຕິທຳ.

ເອກະສານອ້າງອີງ: ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະແກ້ໄຂຂໍ້ຈັດແຍ່ງຂັ້ນບ້ານ, ເລກທີ 404/ກຍ, ລົງວັນທີ 28 ເມສາ 2016
( ໝວດທີ 6 ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ມາດຕາ 25 – 31 )

- ການຍື່ນຄຳຮ້ອງ;
- ການຮັບຄຳຮ້ອງ;
- ການຄົ້ນຄວ້າ ແລະ ການແກ້ໄຂ ຄຳຮ້ອງ;
- ການກະກຽມ;
- ການດຳເນີນການແກ້ໄຂຂໍ້ຂັດແຍ່ງ;
- ການໂຈະ ແລະ ເລື່ອນການແກ້ໄຂຂໍ້ຂັດແຍ່ງ;
- ບົດບັນທຶກຂອງຜົນການແກ້ໄຂຂໍ້ຂັດແຍ່ງ.

ເອກະສານອ້າງອີງ: ດຳລັດວ່າດ້ວຍ ການຊ່ວຍເຫຼືອທາງດ້ານກົດໝາຍ ສະບັບເລກທີ 77 / ລບ ລົງວັນທີ 28 ກຸມພາ 2018
ແມ່ນການໃຫ້ການບໍລິການທາງດ້ານກົດໝາຍໂດຍບໍ່ຄິດຄ່າ ເຊິ່ງຜູ້ໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ ມີດັ່ງນີ້ ( ມາດຕາ12 ).

1. ຜູ້ທຸກຍາກ;
2. ຜູ້ດ້ອຍໂອກາດ;
3. ເດັກທີ່ຕ້ອງການ ການປົກປ້ອງເປັນພິເສດ;
4. ຜູ້ກະທຳຜິດ ທີ່ກົດໝາຍກຳນົດໃຫ້ມີທະນາຍຄວາມເຂົ້າໄປຊ່ວຍເຫຼືອ;
5. ຄົນພິການ;
6. ແມ່ຍິງ ແລະ ເດັກນ້ອຍ ທີ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ;
7. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ຜະລິດ ແລະ ສະໜັບສະໜູນໂດຍ: